**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ**

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ເລກທີ 1304/ຜ-ຟຟລ
ນະຄອນຫຼວງວຽງຈັນ, ວັນທີ 11 ສິງຫາ 2015

# ແຈ້ງການ

ຮຽນ: ທ່ານຜູ້ຖືຮຸ້ນເດີມຂອງ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ແລະ ນັກລົງທຶນ ທີ່ນັບຖື,

ເລື່ອງ: ແຈ້ງການຈອງຊື້ຮຸ້ນສາມັນເພີ່ມທຶນທີ່ຈະສະເໜີຂາຍຕໍ່ຜູ້ຖືຮຸ້ນເດີມຕາມສັດສ່ວນການຖືຮຸ້ນ (Right Offering (RO)) ແລະ ສະເໜີຂາຍຕໍ່ມວນຊົນ (Public Offering (PO)) ຂອງ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ( **ບໍລິສັດ** ) ຂໍຖືເປັນກຽດ ແຈ້ງມາຍັງທ່ານຜູ້ຖືຮຸ້ນເດີມຂອງ ຜ-ຟຟລ ແລະ ນັກລົງທຶນ ເພື່ອຊາບວ່າ: ບໍລິສັດຈະສະເໜີຂາຍຮຸ້ນສາມັນເພີ່ມທຶນ ໃຫ້ແກ່ຜູ້ຖືຮຸ້ນເດີມ (Right Offering (RO)) ແລະ ສະເໜີຂາຍຕໍ່ມວນຊົນ (Public Offering (PO)), ເຊິ່ງມີລາຍລະອຽດດັ່ງນີ້:

## 1. ຮຸ້ນສາມັນເພີ່ມທຶນທີ່ສະເໜີຂາຍຕໍ່ຜູ້ຖືຮຸ້ນເດີມ (Right Offering)

| | |
|---|---|
| • ປະເພດຫຼັກຊັບທີ່ແບ່ງປັນ | ຮຸ້ນສາມັນ |
| • ຈຳນວນຮຸ້ນທີ່ແບ່ງປັນ (ຮຸ້ນ) | 408.738.922 ຮຸ້ນ |
| • ອັດຕາສ່ວນຮຸ້ນ (ເດີມ:ໃໝ່) | 3 ຮຸ້ນເດີມຕໍ່ 1 ຮຸ້ນໃໝ່.ຈຳນວນຮຸ້ນສາມັນທີ່ຍັງເຫຼືອຈາກການບໍ່ໃຊ້ສິດໃນການຈອງຊື້ຮຸ້ນຂອງຜູ້ຖືຮຸ້ນເດີມຈະຕ້ອງແບ່ງປັນໃຫ້ກັບຜູ້ຖືຮຸ້ນເດີມລາຍອື່ນທີ່ສະເໜີຈອງຊື້ຮຸ້ນຫຼາຍກວ່າສັດສ່ວນທີ່ຕົນຈະໄດ້ຮັບການແບ່ງປັນຈົນກວ່າຈະບໍ່ມີຮຸ້ນເຫຼືອໃຫ້ແບ່ງປັນຕາມທີ່ບໍລິສັດເຫັນວ່າເໝາະສົມ. |
| • ລາຄາຈອງຊື້ | 6.000 ກີບ ຕໍ່ ຮຸ້ນ |
| • ລາຄາກຳນົດ | 4.000 ກີບ ຕໍ່ ຮຸ້ນ |
| • ວັນທີຈອງຊື້ ແລະ ຊຳລະຄ່າຮຸ້ນ | 28 ສິງຫາ 2015 ເຖິງວັນທີ 08 ກັນຍາ 2015 (ວັນລັດຖະການ) ເວລາ 8:30 ໂມງ ຫາ 16:30 ໂມງ. (ສະເພາະວັນທີ 08 ກັນຍາ 2015 ເວລາ 8:30 ໂມງຕອນເຊົ້າຫາ 12:00 ໂມງຕອນທ່ຽງ) |

## 2. ຮຸ້ນສາມັນເພີ່ມທຶນທີ່ຈະສະເໜີຂາຍຕໍ່ມວນຊົນ (Public Offering)

| | |
|---|---|
| • ປະເພດຫຼັກຊັບທີ່ແບ່ງປັນ | ຮຸ້ນສາມັນ |
| • ຈຳນວນຮຸ້ນທີ່ແບ່ງປັນ (ຮຸ້ນ) | 44.348.010 ຮຸ້ນ |
| • ລາຄາຈອງຊື້ | 6.800 ກີບຕໍ່ຮຸ້ນ |
| • ລາຄາກຳນົດ | 4.000 ກີບຕໍ່ຮຸ້ນ |
| • ວັນທີຈອງຊື້ ແລະ ຊຳລະຄ່າຮຸ້ນ | 28 ສິງຫາ 2015 ເຖິງວັນທີ 08 ກັນຍາ 2015 (ວັນລັດຖະການ) ເວລາ 8:30 ໂມງ ຫາ 16:30 ໂມງ. |

ຖະໜົນມິດຕະພາບລາວ-ໄທ,ບ້ານທົ່ງກາງ,ເມືອງສີສັດຕະນາກ,ນະຄອນຫຼວງວຽງຈັນສປປລາວຕູ້ປ.ນ **2392**,
ໂທລະສັບ:**(856-21) 316142** ແຟັກ: **(856-21) 316141.** ອີເມລ: edlgenhq@edlgen.com.la, ເວັບໄຊສ: www.edlgen.com.la

(ສະເພາະວັນທີ 08 ກັນຍາ 2015 ເວລາ 8:30 ໂມງ
ຕອນເຊົ້າຫາ 12:00 ໂມງຕອນທ່ຽງ)

ການຈອງຊື້ຮຸ້ນຈະໄດ້ຮັບການຢັ້ງຢືນໃນວັນທີ 17 ກັນຍາ 2015.
ຄາດຄະເນວັນຊື້ - ຂາຍຮຸ້ນສາມັນເພີ່ມທຶນ ແມ່ນ ວັນທີ 25 ກັນຍາ 2015.

**ຜູ້ຖືຮຸ້ນເດີມ ແລະ ນັກລົງທຶນ ສາມາດຂໍຮັບແບບຟອມການຈອງຊື້ຮຸ້ນ ແລະ ຊອກຫາຂໍ້ມູນກ່ຽວກັບການສະເໜີຂາຍເພີ່ມເຕີມໄດ້ທີ່:**

(i) ທີ່ປຶກສາທາງການເງິນ ແລະ ຜູ້ຄໍ້າປະກັນການອອກຈຳໜ່າຍຮຸ້ນ: ບໍລິສັດ ຫຼັກຊັບລ້ານຊ້າງ ມະຫາຊົນ, ເບີໂທລະສັບ (+856-21) 265-461-4, ເບີໂທລະສານ: (+856-21) 265-465-6, ອີເມວ: lxs-brokerage@lxs.com.la;
(ii) ຕົວແທນຈຳໜ່າຍຮຸ້ນ ແລະ ຜູ້ຈັດສັນຮຸ້ນ: ບໍລິສັດ ຫຼັກຊັບ ເຄທີ ຊີມິໂກ້ ຈຳກັດ, ເບີໂທລະສັບ (+66-2) 695-2103, ເບີໂທລະສານ: (+66-2) 631-2242;
(iii) ທະນາຄານພັດທະນາລາວ ສຳນັກງານໃຫຍ່ ເບີໂທລະສັບ: (+856-21) 213-300-04 ແລະ ເບີໂທລະສານ: (+856-21) 213-304, (+856-21) 222-506;
(iv) ສາຂາແຕ່ລະແຫ່ງຂອງທະນາຄານພັດທະນາລາວ ໃນ ສປປ ລາວ;
(v) ບໍລິສັດ ຫຼັກຊັບ ທຄຕລ-ກທ ຈຳກັດ, ເບີໂທລະສັບ (+856-21) 265-477, ເບີໂທລະສານ: (+856-21) 265-488, ອີເມວ: broker@bcel-kt.com;
(vi) ບໍລິສັດ ຫຼັກຊັບ ລາວ-ຈີນ ຈຳກັດ, ເບີໂທລະສັບ: (+856-21) 419-222, ເບີໂທລະສານ: (+856-21) 419-221, ອີເມວ: broker@lcs.com.la
(vii) ດາວໂຫຼດໜັງສືຊວນຊື້ຈາກເວັບໄຊຂອງຕະຫຼາດຫຼັກຊັບລາວ;
(viii) ທ່ານສາມາດສຳເນົາແບບຟອມການຈອງຊື້ຮຸ້ນຈາກໜັງສືພິມ ຫຼື ດາວໂຫຼດຈາກ www.edlgen.com.la, www.lxs.com.la

**ຊື່ທະນາຄານ ແລະ ລາຍລະອຽດບັນຊີຮອງຮັບການຈອງຊື້ຮຸ້ນ:**

| | | |
|---|---|---|
| ຊື່ທະນາຄານ: | ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ); | |
| ຊື່ບັນຊີ: | LXS (EDL GENERATION PLC FOR SHARE SUBSCRIPTION); | |
| ເລກທີບັນຊີ: | 010110001120190001 | ສະກຸນເງິນກີບ; |
| ເລກທີບັນຊີ: | 010110201120190001 | ສະກຸນເງິນບາດ; |
| ເລກທີບັນຊີ: | 010110101120190001 | ສະກຸນເງິນໂດລາສະຫະລັດ. |

ດັ່ງນັ້ນ, ຈຶ່ງແຈ້ງມາຍັງບັນດາທ່ານຜູ້ຖືຮຸ້ນຂອງ ຜ-ຟຟລ ເພື່ອຊາບ.

ຮຽນມາດ້ວຍຄວາມນັບຖື,
ຜູ້ອຳນວຍການໃຫຍ່

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ EDL-Generation Public Company

ບຸນອູ້ມ ສີວັນເພັງ